ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດ ຂອງພະຍາດ COVID-19

ເລກທີ 3073 /ສພກ
ນະຄອນຫຼວງວຽງຈັນ, ວັນທີ 16.11.2020.

# ຂໍ້ຕົກລົງ

## ຊ່ອງທາງພິເສດ (Fast Track Lane) ສໍາລັບການເຂົ້າ-ອອກປະເທດ ໃນໄລຍະປ້ອງກັນ ແລະ ຄວບຄຸມ ການລະບາດຂອງພະຍາດ COVID-19 ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສປ ຈີນ

- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19), ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020;
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ວ່າດ້ວຍການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະວັນທີ 1 ພະຈິກ ຫາ ວັນທີ 31 ທັນວາ 2020, ສະບັບເລກທີ 1202/ຫສນຍ, ລົງວັນທີ 31 ຕຸລາ 2020;
- ອີງຕາມ ໜັງສືສະເໜີຂອງກະຊວງການຕ່າງປະເທດ ກ່ຽວກັບຜົນການປຶກສາຫາລື ການຈັດຕັ້ງປະຕິບັດຊ່ອງທາງພິເສດ ລະຫວ່າງ ສປປລາວ ແລະ ສປ ຈີນ, ສະບັບເລກທີ 2277/ຕປທ. ສພກ, ລົງວັນທີ 7 ຕຸລາ 2020;
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ກ່ຽວກັບ ທິດຊີ້ນໍາຕໍ່ກັບການສະເໜີຂໍອະນຸຍາດປະຕິບັດຊ່ອງທາງພິເສດ (Fast Track Lane) ລະຫວ່າງ ສປປ ລາວ ແລະ ສປ ຈີນ ໃນໄລຍະການລະບາດຂອງ COVID-19, ສະບັບເລກທີ 1229/ຫສນຍ, ລົງວັນທີ 06 ພະຈິກ 2020
- ອີງຕາມ ໜັງສືສະເໜີຂອງຫົວໜ້າກອງເລຂາຄະນະສະເພາະກິດ COVID-19, ສະບັບເລກທີ 3072/ສພກ, ລົງວັນທີ 13 ພະຈິກ 2020.

ເພື່ອແນໃສ່ເຮັດໃຫ້ເສດຖະກິດ-ສັງຄົມຂອງສອງປະເທດໄດ້ຮັບການຟື້ນຟູດີຂຶ້ນ, ລັດຖະບານ ສປປ ລາວ ແລະ ລັດຖະບານ ສປ ຈີນ ໄດ້ຊຸກຍູ້ໃຫ້ການໄປມາຫາສູ່ລະຫວ່າງປະຊາຊົນຂອງສອງປະເທດ ມີຄວາມສະດວກວ່ອງໄວຂຶ້ນ. ບົນພື້ນຖານການປຶກສາຫາລືເປັນເອກະພາບກັນກັບພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍ ສປປ ລາວ - ສປ ຈີນ, ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID-19 ຈຶ່ງໄດ້ຕົກລົງ ກ່ຽວກັບການປະຕິບັດຊ່ອງທາງພິເສດ (Fast Track Lane) ສໍາລັບການເຂົ້າ-ອອກປະເທດ ດັ່ງນີ້:

1. <u>ກຸ່ມຄົນ ແລະ ນິຕິບຸກຄົນ ທີ່ນອນໃນເປົ້າໝາຍ ສາມາດນໍາໃຊ້ຊ່ອງທາງພິເສດ ມີດັ່ງນີ້:</u>
   - ນັກການທູດ ຫຼື ລັດຖະກອນທີ່ໄປປະຕິບັດໜ້າທີ່ທາງລັດຖະການໃນໄລຍະສັ້ນ ຢູ່ປະເທດອີກຝ່າຍ. ຍົກເວັ້ນນັກການທູດທີ່ໄປປະຈໍາການ ຫຼື ໄປໃນນາມສ່ວນຕົວ ຈະພິຈາລະນາຕ່າງຫາກ.
   - ກຸ່ມຄົນ ແລະ ນິຕິບຸກຄົນຂອງຂະແໜງການຄ້າ, ການລົງທຶນ, ການຂົນສົ່ງ, ການຜະລິດ ແລະ ການບໍລິການດ້ານເຕັກນິກ ທີ່ເປັນໂຄງການຂອງລັດຖະບານ ຫຼື ໂຄງການໃຫຍ່ທີ່ສໍາຄັນລະຫວ່າງສອງ

ປະ ເທດທີ່ມີຄວາມຈຳເປັນຕ້ອງການປະຕິບັດໜ້າທີ່ຮີບດ່ວນ ໃນການຟື້ນຟູການດຳເນີນໂຄງການຮ່ວມມືຂະໜາດໃຫຍ່ ແລະ ຂະແໜງຜະລິດທີ່ສຳຄັນລະຫວ່າງ ສປປ ລາວ ແລະ ສປ ຈີນ.

2. **ຂັ້ນຕອນການຈັດຕັ້ງປະຕິບັດ:**

- **ການສະເໜີ**: ອົງການຂອງລັດ, ລັດວິສາຫະກິດ ຫຼື ບໍລິສັດ ຕ້ອງປະກອບເອກະສານຕາມລະບຽບຫຼັກການ ແລະ ຂັ້ນຕອນປົກກະຕິ ຂອງລັດຖະບານທັງສອງຝ່າຍ ແລ້ວຈຶ່ງສະເໜີຕໍ່ອົງການກ່ຽວຂ້ອງລັດຖະບານຂອງຕົນ (ສະຖານທູດ ຫຼື ສະຖານກົງສຸນ) ເພື່ອຂໍອະນຸມັດນຳໃຊ້ຊ່ອງທາງພິເສດ, ເມື່ອໄດ້ຮັບການເຫັນດີແລ້ວ ຈຶ່ງສະເໜີອົງການຮັບຜິດຊອບ ເພື່ອດຳເນີນຂັ້ນຕອນພິຈາລະນາໂດຍໄວ.
- **ການອອກວີຊາ**: ທັງສອງຝ່າຍ ຈະພິຈາລະນາອອກວີຊາໂດຍໄວ ໃຫ້ບຸກຄົນ ຫຼື ນິຕິບຸກຄົນ ທີ່ນອນໃນກຸ່ມເປົ້າໝາຍທີ່ນຳໃຊ້ຊ່ອງທາງພິເສດ, ເມື່ອໄດ້ຮັບອະນຸມັດວີຊາແລ້ວ ຈະແຈ້ງໃຫ້ອີກຝ່າຍໜຶ່ງຊາບ ເພື່ອໃຫ້ບໍລິສັດ ຫຼື ບຸກຄົນສາມາດໄປເອົາວີຊາຢູ່ສະຖານທູດ ຫຼື ສະຖານກົງສຸນໃຫຍ່ຂອງອີກຝ່າຍ. ອາດຈະຂໍເປັນລາຍບຸກຄົນ ຫຼື ເປັນກຸ່ມກໍ່ໄດ້.
- **ການກວດສຸຂະພາບ**: ບຸກຄົນ ຫຼື ນິຕິບຸກຄົນ ຂອງໂຄງການ ຫຼື ບໍລິສັດທີ່ນອນຢູ່ໃນກຸ່ມເປົ້າໝາຍກ່ອນຈະເດີນທາງເຂົ້າປະເທດຂອງອີກຝ່າຍ ຕ້ອງຕິດຕາມສຸຂະພາບຂອງຕົນເອງ ແລະ ກວດວິເຄາະຫາເຊື້ອພະຍາດ COVID-19 ດ້ວຍວິທີ RT-PCR ເພື່ອໄດ້ໃບຢັ້ງຢືນຜົນກວດວິເຄາະເປັນພາສາອັງກິດ ຈາກອົງການກ່ຽວຂ້ອງຂອງປະເທດຕົ້ນທາງ 48 ຊົ່ວໂມງກ່ອນເດີນທາງ.
- **ການວິເຄາະຫາເຊື້ອພະຍາດຢູ່ດ່ານ**: ໃນເວລາມາເຖິງດ່ານສາກົນຊາຍແດນ ຫຼື ສະໜາມບິນສາກົນ, ບຸກຄົນ ຫຼື ນິຕິບຸກຄົນຂອງກຸ່ມເປົ້າໝາຍຕ້ອງໄດ້ຮັບການກວດວິເຄາະຫາເຊື້ອພະຍາດ COVID-19 ຂອງອີກຝ່າຍ ແລະ ໄປຈຳກັດບໍລິເວນຢູ່ສະຖານທີ່ ທີ່ລັດຖະບານຂອງສອງຝ່າຍ ເພື່ອລໍຖ້າຜົນກວດ 48 ຊົ່ວໂມງ ຫຼື ຈົນກວ່າໄດ້ຮັບຜົນກວດ. ຖ້າວ່າຜົນກວດບໍ່ພົບເຊື້ອ ໂຄງການ ຫຼື ບໍລິສັດດັ່ງກ່າວຈະອີງໃສ່ໜັງສືຂະແໜງການກ່ຽວຂ້ອງອອກໃຫ້ເພື່ອໄປຮັບບຸກຄົນດັ່ງກ່າວ ໄປສືບຕໍ່ຈຳກັດບໍລິເວນຢູ່ສະຖານທີ່ເຮັດວຽກຂອງໂຄງການ ຫຼື ບໍລິສັດ ທີ່ໄດ້ຈັດສັນໄວ້ໃຫ້ ດ້ວຍພາຫະນະສະເພາະ ໂດຍບໍ່ມີຊ່ອງຫວ່າງ;
- **ການຄຸ້ມຄອງແບບວົງປິດ**: ໃນໄລຍະເວລາທີ່ບຸກຄົນດັ່ງກ່າວ ເຮັດວຽກຢູ່ປະເທດອີກຝ່າຍ, ໂຄງການ ຫຼື ບໍລິສັດ ມີໜ້າທີ່ຄຸ້ມຄອງ ແລະ ຮັບປະກັນທຸກການເຄື່ອນໄຫວຂອງພວກກ່ຽວໃນການປະຕິບັດມາດຕະການປ້ອງກັນການຕິດເຊື້ອພະຍາດ COVID-19 ທີ່ລັດຖະບານຂອງອີກຝ່າຍກຳນົດໄວ້ ແລະ ຄວບຄຸມທຸກການເຄື່ອນໄຫວຂອງຜູ້ກ່ຽວຢ່າງເຂັ້ມງວດ.
- **ຄວາມຮັບຜິດຊອບໃນການປ້ອງກັນການຕິດເຊື້ອພະຍາດ COVID-19**: ໂຄງການ ຫຼື ບໍລິສັດຕ້ອງຮັບຜິດຊອບໃນການປ້ອງກັນການແຜ່ເຊື້ອຂອງພະຍາດ COVID-19 ຂອງບຸກຄົນທີ່ກ່ຽວຂ້ອງ ຫຼັງເຂົ້າປະເທດອີກຝ່າຍ, ການຄຸ້ມຄອງ ແລະ ຕິດຕາມກວດກາ ຕາມລັດຖະບານອີກຝ່າຍກຳນົດ. ພ້ອມທັງອຳນວຍຄວາມສະດວກໃນການດຳເນີນການມາດຕະການຕ່າງໆເພື່ອປ້ອງກັນການລະບາດຂອງເຊື້ອພະຍາດ COVID-19.

3. **ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີສະບັບໃໝ່ປ່ຽນແທນ.**

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ,**
**ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ ແລະ ແກ້ໄຂ**
**ການລະບາດພະຍາດ COVID-19**

ສົມດີ ດວງດີ